# ຄິດໃຝ່ໃນທັມ

໑- ຄົນເຮົາເກີດມາ　　ເກີດມາເພື່ອໃຊ້ໜີ້ກັມ
ຈົ່ງຟ້າວຝັນໃຝ່ໃນທັມ　　ຍຶດຫຼັກໝັ້ນຂອງພຸທທະອົງ
ສົ່ງເສີມຈິດໃຈ　　ໃຫ້ໃຝ່ຫາທັມມະຍືນຍົງ
ຖືເອົາພຸທທັມພະສົງ　　ເປັນຫຼັກໝັ້ນຊົ່ວໃນຊີວີ ...

໒- ຄົນເຮົາເກີດມາ　　ເກີດມາຄວນພະວັນນາ
ດອກໄມ້ທູບທຽນບູຊາ　　ຈົ່ງຕັ້ງໜ້າຫາແຕ່ຄວາມດີ
ມວນຊົນໂລກາ　　ມ້ວຍຊີວາໄປແລ້ວເປັນຜີ
ສູ່ນາຣົກອະເວຈີ　　ຫາກຄວາມດີບໍ່ໄດ້ສ້າງສັນ .

*/ *ເກີດແກ່ເຈັບຕາຍ　　ວຽນວາຍໝູນໄປຕາມກັມ*
*ຊົ່ວດີທີ່ໄດ້ເຄີຍທຳ　　ຈະຊີ້ນຳເມື່ອສູ່ນິພານ*
*ທັນມາເສີມສ້າງ　　ໃນທາງພະພຸທສວັນ*
*ຊະຣາກິເລດເພນທັນ　　ແລ້ວຊີວັນຈະເປັນສຸກໄປ ...*

໓- ຄົນເຮົາເກີດມາ　　ເກີດມາຕາມພົມລິຄິດ
ຫຼີກທັມມະຊາດບໍ່ວິດ　　ໜູ່ມງາມແຫ້ງຫ່ຽວຍາມແກ່ກາຍ
ປ່ຽນແປງສະພາບ　　ຫຼາຍວັນເດືອນນານປີຜ່ານໄປ
ຄວາມຄິດບໍ່ຕາມຮູບກາຍ　　ຈົ່ງໝັ້ນໝາຍຄຳພຸທທະອົງ .